Minnesota Department of Health • ໃບຂໍ້ມູນກ່ຽວກັບການກໍ່ການລ້າຍຊີວະວິດທະຍາ 11/2/2005

# ຢາເບື່ອ "ຣາຍຊິນ"

## ຢາເບື່ອ "ຣາຍຊິນ" ແມ່ນຫຍັງ?

**"ຣາຍຊິນ"** ເປັນຢາເບື່ອຊນິດນຶ່ງ ທີ່ເກີດມາຈາກເມັດຖົ່ວ ຂອງຕົ້ນໄມ້ຊື່ "ກາສຕໍປລັນ" ມັນມີຣາກ ທີ່ໄຊ້ເຮັດນໍ້າມັນ "ກາສຕໍໂອຽ". ຊຶ່ງຈະເປັນແບບຂອງແຫຼວ, ຜົງ, ຫລື ແກ້ວ.



*ໃນໝາກ ເດສະເຕີ*

ຈະເປັນໄປໄດ້ຍາກ ທີ່ຈະມີຜູ້ໃດ ຜູ້ນຶ່ງເບື່ອຈາກ "ຣາຍຊິນ" ໂດຍບັງເອີນ. ມັນຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອມີຄົນເອົາ "ຣາຍຊິນ" ໃສ່ລົງໄປໂດຍເຈດຕະນາ ຄືໄຊ້ຕາງເປັນອາວຸດ.

"ຣາຍຊິນ" ອາດໄຊ້ເພື່ອເບື່ອຄົນໄດ້ໂດຍການປົນໃສ່ອາຫານຫລືນໍ້າ. ຖ້າ "ຣາຍຊິນ" ເປັນນໍ້າ ຫລືຜົງ ຖ້າຫາກປ່ອຍອອກໄປທາງອາກາດຄົນທັງຫລາຍອາດເບື່ອໄດ້ໃນເມື່ອຫາຍໃຈເອົາຢານັ້ນເຂົ້າໄປໃນຮ່າງກາຍ. ຖ້າເຂົາປະປົນໃສ່ກັບຂອງແຫຼວຕ່າງໆ, ໃນເວລານັ້ນຢາເບື່ອກໍ່ຈະຊຶມເຂົ້າໄປໃນຜິວໜັງ ເຖິງແມ່ນວ່າຈະບໍ່ເຄີຍມີການທຳກັນມາກ່ອນກໍຕາມ. "ຣາຍຊິນ" ຍັງໄຊ້ເບື່ອຄົນໄດ້ໂດຍການສີດເຂົ້າໄປໃນຮ່າງກາຍ.

ການໃສ່ຢາເບື່ອໂດຍໄຊ້ "ຣາຍຊິນ" ອາດຈະທຳໃຫ້ຄົນເສັຍຊີວິດໄດ້ ແຕ່ກໍ່ບໍ່ສເມີໄປທຸກຄັ້ງ. ອາການຈະປະກົດອອກມາແບບໃດນັ້ນກໍຂຶ້ນຢູ່ກັບວ່າ "ຣາຍຊິນ" ມີນ້ອຍຫຼືຫລາຍປານໃດ ແລະຂຶ້ນນຳວິທີປຸງແຕ່ງທີ່ຈະເບື່ອຄົນນັ້ນ.

- "ຣາຍຊິນ" **ປົນກັບອາຫານຫລືນໍ້າ** ອາດຈະມີອາການຄ້າຍຄືກັບເບື່ອອາຫານທົ່ວໄປເຊັ່ນ ມີການຮາກອອກ ແລະຖ່າຍທ້ອງເປັນເລືອດ. ຢາເບື່ອຍັງຈະໄປແພ້ຕັບ ແລະໝາກໄຂ່ຫລັງອີກ. ຖ້າຢາເບື່ອມີຫລາຍພໍ ມັນກໍ່ຈະເຮັດໃຫ້ຄົນເຈັບປ່ວຍໄດ້ພາຍໃນສາມວັນ. "ຣາຍຊິນ" ພຽງນ້ອຍນຶ່ງ

- ຄົນທີ່**ຫາຍໃຈເອົາ** "ຣາຍຊິນ" ຈະເກີດເປັນໄອ ພາຍໃນສາມຊົ່ວໂມງ. ຈະມີອາການອຶນຫົວ ຢາກຮາກ, ຖ່າຍທ້ອງ ແລະເຈັບຕາມຮ່າງກາຍ ພາຍໃນ 18 ຫາ 24 ຊົ່ວໂມງຕໍ່ມາ. ຖ້າຢາເບື່ອມີປະຣິມານຫຼາຍ, ຈະທຳໃຫ້ຄົນທັງຫຼາບເປັນໄຂ້ກໍ່ຈະເສັຍຊີວິດພາຍໃນ 36 ຫາ 72 ຊົ່ວໂມງ ເນື່ອງຈາກມີຜົນກະທົບຕໍ່ຫົວໃຈແລະເສັ້ນເລືອດ ແລະນໍ້າຖ້ວມປອດ.

- **ການສັກ** "ຣາຍຊິນ" ເຂົ້າໄປໃນຮ່າງກາຍ ຈະທຳຣາຍກ້າມເນື້ອຢູ່ໃນບໍຣິເວນທີ່ສີດຢາເຂົ້າໄປນັ້ນທັນໃດ. ຈາກນັ້ນຕໍ່ມາກໍອາດຈະທຳໃຫ້ຄົນເສັຍຊີວິດໄດ້ໃວລາບໍ່ດົນເທົ່າໃດ ເພາະອະວັຍະວະພາກສ່ວນສຳຄັນຂອງຮ່າງກາຍຢຸດທຳງານ.

- ການໃຊ້ "ຣາຍຊິນ" **ຊຶມເຂົ້າຜ່ານທາງຜິວໜັງ** ເປັນອີກວິທີນຶ່ງ ທີ່ບໍ່ມີໃຜຈະຕິດລະບາດ ຢາເບືອນີ້ຍ້ອນ ແລະກໍ່ບໍ່ເປັນວິທີທີ່ຈະພໍເສັຍຊີວິດຍ້ອນ. ເພື່ອຈະໄຊ້ແບບນີ້ ຢາເບື່ອນີ້ຕ້ອງໄດ້ປະສົມກັບນໍ້າຢາປະສົມ. ອາການຈະຂຶ້ນຢູ່ກັບນໍ້າຢາປະສົມທີ່ໄຊ້ ແລະດົນປານໃດ ທີ່ຢາເບື່ອຈະຊຶມເຂົ້າໄປໃນຜິວໜັງ.

## ຖືກຢາເບື່ອ "ຣາຍຊິນ" ຈະປິ່ນປົວໄດ້ບໍ?

ປັດຈຸບັນນີ້ ຍັງບໍ່ມີຢາສຳລັບແກ້ຢາພິດ ແຕ່ອາການ ຂອງການເບື່ອຢາພິດນີ້ປິ່ນປົວໄດ້. ການປິ່ນປົວຈະຂຶ້ນຢູ່ກັບວ່າ ຄົນນັ້ນໄດ້ຕິດຢາເບື່ອຢ່າງໃດ ແລະເພື່ອຈະໄດ້ທຳການຊ່ວຍໃນລະບົບຫາຍໃຈ, ໃສ່ນໍ້າເກືອ ແລະຢາຕ້ານເຊື້ອເຂົ້າທີ່ເສັ້ນເລືອດ. ຄົນປ່ວຍທີ່ມີອາການພົ້ນຂີດໄປໄດ້ກາຍຫ້າວັນນັບວ່າມີໂອກາດທີ່ຈະເຊົາດີໄດ້.

## ຈະການປ້ອງກັນ "ຣາຍຊິນ" ໄດ້ບໍ?

ປັດຈຸບັນນີ້ ບໍ່ມີທາງໃດທີ່ຈະປ້ອງກັນຄົນທົ່ວໄປ ໄວ້ລ່ວງໜ້າໄດ້ບໍ່ໃຫ້ໄດ້ການຕິດຈາກ "ຣາຍຊິນ". ຍັງມີການຄົ້ນຄວ້າວິຈັຍກັນຢູ່ວ່າຈະຜະລິດຢາຕ້ານເຊື້ອປະຕິຊີວະນະແບບໃດຂຶ້ນເພື່ອຕໍ່ຕ້ານມັນໄດ້.

## ຈະຕິດຢາເບື່ອ "ຣາຍຊິນ" ຈາກຄົນອື່ນໄດ້ບໍ?

ບໍ່ໄດ້. "ຣາຍຊິນ" ເປັນຢາເບື່ອຊະນິດນຶ່ງ. ມັນບໍ່ເກີດມາຈາກເຊື້ອໂຣກທີ່ມີຊີວິດແລະຈະບໍ່ແຜ່ລະບາດຕໍ່ໄປໃສ່ຄົນນຶ່ງໄປຫາອີກຜູ້ອື່ນໄດ້.

## ເປັນຫຍັງ "ຣາຍຊິນ" ຈຶ່ງຄິດວ່າຈະໃຊ້ ເປັນອາວຸດເພື່ອທຳການກໍ່ການຮ້າຍໄດ້?

"ຣາຍຊິນ" ໄດ້ຖືກຄົ້ນຄວ້າວິຈັຍພົບວ່າຈະນຳເອົາໄປໄຊ້ເປັນອາວຸດ ຈະໄດ້ໃນສັຕະວັດນຶ່ງຜ່ານມາ. ສະຫະຣັຖ ໄດ້ທຳການຄົ້ນຄວ້າວິຈັຍເລື່ອງນີ້ຕອນສົງຄາມໂລກຄັ້ງທີນຶ່ງ, ແລະນັກວິທຍາສາດອັງກິດ ແລະອາເມຣິກັນກໍ່ໄດ້ຜະລິດແລະທົດລອງລະເບີດ "ຣາຍຊິນ" ຕອນສົງຄາມໂລກຄັ້ງທີສອງ.

ກຸ່ມທະຫານໝູ່ນກຸ່ມນຶ່ງ ໃນພາກຕາວັນອອກສ່ຽງເໜືອຂອງຣັຖມິນເນໂຊຕາ ໄດ້ລອບວາງແຜນຈະໄຊ້ "ຣາຍຊິນ" ໃສ່ເຈົ້າໜ້າທີ່ລະຫວ່າງປີ 1990. ຕາມທີ່ຮູ້ກັນວ່າປະເທດອີຣັກ ກໍໄດ້ທຳການຜະລິດ "ຣາຍຊິນ" ເພື່ອເອົາມາໄຊ້ເປັນອາວຸດ, ແລະກໍມີ ຫລັກຖານທີ່ແຈ້ງໃຫ້ເຫັນວ່າ ທາງຝ່າຍກໍ່ການຮ້າຍ "ອາວໄກດາ" ກໍນັບວ່າເປັນອີກກຸ່ມນຶ່ງທີ່ພຍາຍາມໄຊ້ "ຣາຍຊິນ". ໃນປີ 1978, ຢາສີດ "ຣາຍຊິນ" ກໍ່ໄດ້ເອົາມາໄຊ້ທຳຣາຍຜູ້ຄັດຄ້ານ ບູນກາເຣັຍ ຜູ້ນຶ່ງຢູ່ໃນບ່ອນຈອດຣົດເມແຫ່ງນຶ່ງໃນນະຄອນລອນດອນ.

"ຣາຍຊິນ" ຍັງບໍ່ເຄີຍໄດ້ເອົາມາໄຊ້ເປັນອາວຸດ ໃນການທຳລາຍທີ່ເປັນພັຍພິບາດທີ່ຮ້າຍແຮງແລະຍັງບໍ່ມີການຊີ້ໃຫ້ເຫັນເຖິງຄວາມເປັນໄປໄດ້ໃນການທີ່ຈະປ່ອຍ "ຣາຍຊິນ" ຫລາຍໆຂຶ້ນໄປໃນອາກາດນັ້ນ. ສິ່ງທີ່ຈະ

MINNESOTA MDH DEPARTMENT OF HEALTH
Communications Office
625 North Robert Street/Box 64975
St. Paul, MN 55164-0975
(651) 201-4989
www.health.state.mn.us

# ຢາເບື່ອ "ຣາຍຊິນ" – ໜ້າ 2

ເປັນໄປໄດ້ແນ່ທີ່ສຸດ ກໍຄືການ ໄຊ້ "ຣາຍຊິນ" ຢູ່ໃນບ່ອນຮ່ອມແຄບ
ແລະປິດ, ເຊັ່ນໃລາງຣົດໄຟໃຕ້ດິນ, ຢູ່ໃນຣົດເມ, ຫລືຢູ່ໃນຮ້ານຄ້າ.

"ຣາຍຊິນ" ຖືວ່າຮູ້ວ່າເປັນອາວູດໄຊ້ໃນການກໍ່ການຮ້າຍໄດ້ ເພາະວ່າ

- ມັນຣາຄາຖືກ ແລະເຮັດໄດ້ງ່າຍ
- ບໍ່ມີຢາ "ວັກຊິນ" ຫລື ວິທີປິ່ນປົວໄດ້
- ມັນເປັນຢາທີ່ມີພິດທີ່ສຸດ ແລະອາດພາໃຫ້ຄົນເສັຍຊີວິດຍ້ອນ

**ຈະເຮັດຢ່າງໃດ ຖ້າຂ້ອຍຄິດວ່າຖືກເບື່ອ "ຣາຍຊິນ" ແລ້ວ?**

ຖ້າທ່ານຫາກເບື່ອ "ຣາຍຊິນ" ແລ້ວ, ມັນກໍ່ບໍ່ຊ່າງວ່າທ່ານຈະຮູ້
ຮູ້ໄດ້ວ່າເປັນຫຍັງແທ້. ແຕ່ວ່າຖ້າທ່ານຫາກຍັງສົງໃສວ່າຕົນເອງອາດ
ຈະຖືກເບື່ອຢ່າງແນ່ນອນ, ທ່ານຕ້ອງໄປຫາໝໍຜູ້ປະຈຳຕົວ ຂອງທ່ານ
ທັນທີ. ຖ້າທ່ານພົບເຫັນເຫດການທີ່ໜ້າສົງໄສ ຫລືເຫັນການ
ເຄື່ອນໄຫວຂອງ ບຸກຄົນທີ່ຢູ່ໃນເຂດຄຸ້ມວົງສັງຄົມຂອງທ່ານ,
ລວມທັງເຊັ່ນ ຄິດວ່າເຂົາ ອາດຈະມີການຜະລິດຢາເບື່ອ
ເພື່ອຈະນຳໄປໃຊ້ແທນເປັນອາວຸດ, ໃຫ້ແຈ້ງກັບເຈົ້າໜ້າຕຳຣວດ
ໃນທ້ອງທີ່ຂອງທ່ານທັນທີ.